Lao Southern Baptist Fellowship

# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 16 ເດືອນຕຸລາ 2022 (10-16-2022 )

## ເປັນຫຍັງພວກເຮົາຈຶ່ງຕ້ອງການພຣະຄຳຂອງພະເຈົ້າ

*ສິ່ງໃດທີ່ຄວນຈະມາພ້ອມກັບຊຸດຂອງຄຳແນະນຳແຕ່ບໍ່ໄດ້ຕິດຕາມມານຳ?*

**ຈຸດສຳຄັນໃນບົດຮຽນ:** ພຣະຄັມພີເປີດເຜີຍທຸກສິ່ງທີ່ພວກເຮົາຕ້ອງການເພື່ອດຳເນີນຊີວິດຢ່າງມີຊັຍຊນະ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທ່ານເຄີຍໄປຊົມການຫຼິ້ນດົນຕຣີຊິມໂຟນີ (symphony) ຫຼື ບໍ່? ທ່ານຈັບເອົາເຈັ້ງລາຍການ, ຊອກຫາບ່ອນນັ່ງ ຂອງທ່ານ, ແລະລໍຖ້າການສະແດງໃຫ້ເລີ້ມຕົ້ນ. ນັກດົນຕຣີແຕ່ລະຄົນຄ່ອຍໆທະຍອຍກັນເຂົ້າສູ່ເວທີທາງຂວາມື. ບຶດນຶ່ງສຽງວຸ້ນວາຍກໍດັງຂຶ້ນ; ແຕ່ມັນບໍ່ແມ່ນຜົນງານຊິ້ນເອກທີ່ທ່ານຕັ້ງໃຈມາເພື່ອຄວາມເພີດເພີນ. ແທນທີ່ຈະເປັນການປະສົມກົມກຽວຂອງສິລປະດົນຕຣີ, ທ່ານໄດ້ຍິນສຽງອຶກກະທຶກຂອງເຄື່ອງດົນຕຣີສາລະພັດຢ່າງ, ຍ້ອນວ່ານັກດົນຕຣີແຕ່ລະຄົນເຮັດສິ່ງທີ່ຕົນເອງຕ້ອງການເພື່ອປັບແຕ່ງດົນຕຣີແລະອຸ່ນເຄື່ອງ.

ແນວໃດກໍຕາມ, ບໍ່ດົນ, ຜູ້ບັນຊາການກໍກ້າວຂຶ້ນສູ່ແທ່ນທຳມາດ ແລະເຄາະໄມ້ສັນຍານຂອງລາວ. ເມື່ອລາວໂບກມືຂອງລາວເປັນສັນຍານ, ຄອນເສີດກໍເລີ້ມຕົ້ນ, ວົງດົນຕຣີປະສານສຽງ, ແລະຜົນໄດ້ຮັບແມ່ນຄວາມມ່ວນຊື່ນດົນຕຣີ ຊິມໂຟນີນັ້ນ. **ຄວາມແຕກຕ່າງແມ່ນຫຍັງ?** ຜູ້ຫຼີ້ນດົນຕຣີທັງຫມົດກຳລັງຫຼີ້ນພາກສ່ວນຂອງຕົນໃນຄຳຮ້ອງແລະທຳນອງຂອງຜູ້ແຕ່ງ (composer). <u>ນັກດົນຕຣີທຸກຄົນແມ່ນປະຕິບັດຕາມຄວາມເປັນຜູ້ນຳຂອງຜູ້ຄວບຄຸມວົງດົນຕຣີ</u>.

ໃນຊີວິດນີ້, ພວກເຮົາດຳເນີນຊີວິດຢູ່ໃນຄວາມບໍ່ສງົບທາງດ້ານຈິດວິນຍານ. ຄົນສ່ວນໃຫຍ່ເຮັດໃນສິ່ງທີ່ຖືກຕ້ອງໃນສາຍຕາຂອງຕົນເອງ, ແທນທີ່ຈະຊອກຫາແຫຼ່ງອຳນາດທີ່ເຊື່ອຖືໄດ້ເພື່ອເປັນແນວທາງໃນການກະທຳຂອງພວກຕົນ. ໃນຖານະເປັນບັນດາຜູ້ທີ່ມີຄວາມເຊື່ອ, ພວກເຮົາສາມາດສັບສົນໄດ້ງ່າຍ. ແນວໃດກໍຕາມ, ເມື່ອພວກເຮົາ<u>ວາງຊີວິດຢູ່ເທິງພຣະຄຳຂອງພຣະເຈົ້າ</u>, <u>ພວກເຮົາຕິດຕາມຜູ້ນຳພາແຫ່ງຈັກກະວານ</u> <u>ໃນຂນະທີ່ກຳລັງຫຼີ້ນເພງອັນມ່ວນຊື່ນດີເລີດຂອງພຣະອົງ.</u>

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>2 ຕີໂມທຽວ 3:1-5</u>

*1 ແຕ່ຈົ່ງຮູ້ຈັກຂໍ້ຄວາມນີ້ວ່າ ໃນຄາວທີ່ສຸດນັ້ນຈະເກີດຄວາມລຳບາກຢ່າງຮ້າຍແຮງ. 2 ເພາະວ່າຄົນທັງຫລາຍຈະເຫັນແກ່ຕົວ, ເຫັນແກ່*
*ເງິນຄຳ, ອວດຕົວ, ຈອງຫອງ, ຊອບດ່າວ່າ, ບໍ່ເຊື່ອຟັງຄວາມພໍ່ແມ່, ເນຣະຄຸນ, ເປັນຄົນບໍ່ມີສິນທັມ. 3 ເປັນຄົນຂາດມະນຸສທັມ, ບໍ່*
*ຍອມຜ່ອນຜັນຜູ້ໃດ, ໃສ່ຮ້າຍປ້າຍສີກັນ, ບໍ່ຮູ້ຈັກບັງຄັບຕົນ, ມີໃຈໂຫດຮ້າຍ, ເປັນຄົນບໍ່ຮັກການດີ, 4 ເປັນຄົນທໍຣະຍົດ, ດື້ດ້ານ, ອວດ*
*ສະຫາວ, ແລະເປັນຄົນຮັກຄວາມສນຸກຫລາຍກວ່າຮັກພຣະເຈົ້າ. 5 ເຂົາກໍເຮັດເໝືອນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ ແຕ່ວ່າຣິດອຳນາດ*
*ຂອງການນັບຖືນັ້ນ ເຂົາກໍປະຕິເສດເສັຽເຈົ້າຈົ່ງຫລີກໜີເສັຽຈາກຄົນຢ່າງນັ້ນ.*

ບາບອຸດົມສົມບູນຢູ່ໃນວັທນະທັມຂອງພວກເຮົາ. ສິ່ງທີ່ອັກຄະສາວົກໂປໂລຂຽນເມື່ອສອງພັນປີກ່ອນນີ້ແນ່ນອນວ່າແມ່ນເປັນການບັນລະຍາຍເຖິງ <u>ວັທນະທັມຂອງສະຕະວັດທີຊາວເອັດຂອງພວກເຮົາ</u>! ປໂຍກ ໂດຍປໂຍກ, ພວກເຮົາສາມາດຮັບຮູ້ຄວາມບາບ ແລະຄວາມຊົ່ວຮ້າຍທີ່ໂປໂລໄດ້ລະບຸໄວ້ດັ່ງຕໍ່ໄປນີ້:

- ຜູ້ຄົນມີຕົນເອງເປັນຈຸດສູນກາງ.
- ຜູ້ຄົນເປັນວັດຖຸນິຍົມ.
- ຜູ້ຄົນມີຄວາມຈອງຫອງແລະຖືກຽດສັກສີ.

- ຜູ້ຄົນມີຄວາມດູຖູກ, ຂາດຄວາມປອງດອງ, ຄວາມໃສ່ຮ້າຍປ້າຍສີ, ຄວາມໂຫດຮ້າຍ, ແລະບໍ່ຮັກຜູ້ອື່ນຊື່ໆ.
- ເດັກນ້ອຍບໍ່ເຊື່ອຟັງພໍ່ແມ່ ແລະພໍ່ແມ່ດູຖູກໃຊ້ລູກໃນທາງຜິດ.
- ຜູ້ຄົນບໍ່ບໍຣິສຸດ ແລະ ບໍ່ຮູ້ບຸນຄຸນ(ເນຣະຄຸນ).
- ຜູ້ຄົນຮັກຄວາມສຸກຂອງໂລກ ຫຼາຍກວ່າຄວາມສຸກຂອງພຣະເຈົ້າ.
- ແມ້ກະທັ້ງຜູ້ນຳດ້ານຈິດວິນຍານກໍຍັງຫຼອກລວງພວກເຮົາ.

ແທ້ຈິງແລ້ວ, ພວກເຮົາອາສັຍຢູ່ໃນຊ່ວງເວລາແຫ່ງການປາສຈາກກົດລະບຽບທາງຈິດວິນຍານ. ຜູ້ຄົນເຮັດອັນໃດກໍຖືກຕ້ອງຕາມສາຍຕາຂອງຕົນເອງແທ້ໆ. ມັນເປັນຫຼັກການປະຕິບັດຂອງບາບ. ບາບມີຢູ່ໃນວັທນະທັມຂອງພວກເຮົາເພາະວ່າບາບມີຄວາມງອກງາມຢູ່ໃນໃຈຂອງມະນຸດທຸກຄົນ. ບໍ່ມີຄົນໃດໃນພວກເຮົາທີ່ມີພູມຕ້ານທານຈາກຄວາມປາຖນາທີ່ຈະເຂົ້າຫາຊິມໂຟນີ (symphony) ຂອງຊີວິດໃນວິທີການຂອງຕົນເອງ. ພວກເຮົາທຸກຄົນຕ້ອງການເດີນຂະບວນໄປຕາມຈັງຫວະຂອງກອງ (drum) ຂອງພວກເຮົາເອງ, ແຕ່ພວກເຮົາບໍ່ຍອມສແວງຫາຄວາມເປັນອິສຣະທາງສິນທັມນີ້ໂດຍບໍ່ມີຜົນກະທົບເສັຽຫາຍ. ໃນເມື່ອມະນຸດດຳເນີນງານຄືກັບວ່າບໍ່ມີມາດຕະຖານສາກົນແຫ່ງຄວາມເຊື່ອ ແລະແຫ່ງພຶດຕິກັມ, ຜົນສະທ້ອນທາງລົບຈຶ່ງໄດ້ເກີດຂຶ້ນ.

*ບາບອັນໃດແດ່ທີ່ຖືກຍອມຮັບ ຫຼືແມ້ແຕ່ມີການສເລີມສລອງໃນວັທນະທັມທຸກມື້ນີ້?*

ພວກເຮົາທຳຮ້າຍຕົວເຮົາເອງໂດຍການປະພຶດຂອງເຮົາ, ແລະຫຼາຍເທື່ອພວກເຮົາມັກຈະທຳຮ້າຍຄົນອື່ນຄືກັນ. ພວກເຮົາຕໍ່ສູ້ກັນໃນເຣື່ອງອຸດົມຄະຕິ ແລະວິທີການຂອງຊີວິດທີ່ດີທີ່ສຸດ, ແລະໃນທີ່ສຸດພວກເຮົາສິ້ນສຸດລົງເຖິງການຂາດ "**ຄວາມຮັກໃນສິ່ງທີ່ດີ**" (ຂໍ້. 3). ໂດຍປາສຈາກພຣະເຈົ້າ, ມະນຸດຊາດກໍແມ່ນຄ້າຍຄືວົງດົນຕຣີຍັກ(ໃຫຍ່)ທີ່ນັກດົນຕຣີທຸກຄົນຫຼິ້ນເພງຂອງຕົນເອງໃນຂນະທີ່ປະຕິບັດຕາມ "ຜູ້ນຳດົນຕຣີ" ທາງໂລກທີ່ພວກເຂົາເຈົ້າເລືອກດ້ວຍຕົນເອງ. <u>ໃນຖານະເປັນຊາວຄຣິສຕຽນ, ພວກເຮົາມີຊີວິດຢູ່ໃນວັທນະທັມທີ່ຂັດແຍ່ງກັບພຣະວັຈນະ(ພຣະຄຳ)ຂອງພະເຈົ້າ</u>.

## 2. 2 ຕີໂມທຽວ 3:13-15

*[13] ແຕ່ຄົນຊົ່ວຮ້າຍແລະຄົນປອມຕົວຈະກຳເລີບທະວີຂຶ້ນໄປ ລໍ້ລວງຄົນອື່ນໃຫ້ຫລົງ ແລະຕົວເຂົາເອງກໍຖືກລໍ້ລວງເໝືອນກັນ. [14] ແຕ່ຝ່າຍເຈົ້າ, ຈົ່ງດຳເນີນຕໍ່ໄປໃນສິ່ງທີ່ເຈົ້າໄດ້ຮຽນຮູ້ແລ້ວ ແລະໄດ້ເຊື່ອຢ່າງໝັ້ນຄົງ ເຈົ້າກໍຮູ້ແລ້ວວ່າເຈົ້າໄດ້ຮຽນມາຈາກຜູ້ໃດ.[15] ແລະຮູ້ແລ້ວວ່າ ຕັ້ງແຕ່ນ້ອຍມາແລ້ວເຈົ້າກໍຮູ້ພຣະທັມຄັມພີອັນສັກສິດ ຊຶ່ງສາມາດໃຫ້ເຈົ້າມີປັນຍານຳເຈົ້າໄປເຖິງຄວາມພົ້ນໄດ້ດ້ວຍທາງຄວາມເຊື່ອໃນພຣະຄຣິດ ຄືພຣະເຢຊູ.*

ໃນໂລກນີ້, ອັຄສາວົກໂປໂລໄດ້ຂຽນໄວ້ວ່າ "ແຕ່ຄົນຊົ່ວຮ້າຍແລະຄົນປອມຕົວຈະກຳເລີບທະວີຂຶ້ນໄປ ລໍ້ລວງຄົນອື່ນໃຫ້ຫລົງ ແລະຕົວເຂົາເອງກໍຖືກລໍ້ລວງເໝືອນກັນ." ພວກເຂົາເອງຖືກຫລອກລວງ, ໂດຍຄິດວ່າພວກເຂົາຮູ້ວ່າອັນໃດຖືກຕ້ອງເມື່ອພວກເຂົາບໍ່ໄດ້ຮູ້. ແຕ່ເຂົາເຈົ້າບໍ່ໄດ້ເກັບຮັກສາການຫຼອກລວງໄວ້ກັບຕົນເອງ. ພວກເຂົາສແວງຫາຄົນອື່ນໃຫ້ເຂົ້າຮ່ວມເປັນໝູ່ຄະນະແຫ່ງການຫຼອກລວງນັ້ນ. ນີ້ໝາຍຄວາມວ່າ, ແຕ່ລະມື້ລະວັນ, ພວກເຮົາອາດຜະເຊີນໜ້າກັບຄວາມຄິດແລະການປະພຶດຫຼອກລວງທີ່ຂັດ (ກົງກັນຂ້າມ) ກັບພຣະເຈົ້າ. ບາງຄັ້ງ, ສິ່ງເຫຼົ່ານີ້ຈະມາຈາກນອກຄຣິສຕະຈັກ. ບາງຄັ້ງ, ໜ້າເສັຽດາຍ, ສິ່ງເຫຼົ່ານີ້ຈະມາຈາກພາຍໃນຄຣິສຕະຈັກ. ບໍ່ວ່າຈະແຈ່ມແຈ້ງຫຼືບໍ່, ໂປໂລເຕືອນພວກເຮົາໃຫ້ຕໍ່ຕ້ານການຫຼອກລວງ ແລະການເຊື່ອ ຫຼື ການປະພຶດໃນທາງທີ່ຂັດແຍ່ງກັບພຣະເຈົ້າ.

ວັທນະທັມແຍ່ງຊິງຄວາມສົນໃຈຂອງພວກເຮົາ ແລະ ແຂ່ງຂັນເພື່ອເອົາຄວາມຈົງຮັກພັກດີຂອງພວກເຮົາ. ເຫຼືອໄວ້ແຕ່ຕົວເຮົາເອງ, ສຽງແລະພຶດຕິກຳທີ່ແຂ່ງຂັນກັນເຫຼົ່ານີ້ສາມາດເຮັດໃຫ້ພວກເຮົາສັບສົນ-ຄືກັບການສັບສົນທີ່ບໍ່ລົງຮອຍກັນຂອງຄະນະນັກດົນຕຣີໃນການປັບສຽງກ່ອນການສະແດງຄອນເສີດ. ໃນຊິມໂຟນີ(symphony)ແຫ່ງຊີວິດ, ພວກເຮົາອາດຈະໝັ້ນໃຈຕົນເອງວ່າສຽງນອກຄີ(off-key)ຂອງໂລກແມ່ນທຳນອງທີ່ເໝາະສົມທີ່ພວກເຮົາຄວນຈະປັບຊີວິດຂອງພວກເຮົາ-ຫຼືຈັງຫວະສຸດທ້າຍທີ່ພວກເຮົາສົມຄວນຈະເຂົ້າກັນໄດ້. <u>ນັ້ນແມ່ນເຫດຜົນທີ່ພວກເຮົາຈຳເປັນຕ້ອງດຳເນີນຊີວິດຂອງພວກເຮົາຕາມມາດຕະຖານສູງສຸດ</u>-**ແລະມາດຕະຖານນັ້ນແມ່ນພຣະຄຳຂອງ**

**ພຣະເຈົ້າ.** ທ່ານໂປໂລເນັ້ນໜັກເຖິງສອງວິທີທີ່ສຳຄັນທີ່ພຣະຄຳຂອງພະເຈົ້າໃຫ້ສະຕິປັນຍາແກ່ເຮົາເພື່ອປ້ອງກັນການຫຼອກລວງຄື:

1. **ພຣະຄຳຂອງພຣະເຈົ້າສະແດງໃຫ້ພວກເຮົາເຫັນວິທີການສູ່ຄວາມລອດພົ້ນ.** ໃນສມັຍຂອງໂປໂລ, ບັນດາພວກຄູສອນປອມໄດ້ເຂົ້າໄປໃນຄຣິສຕະຈັກເມືອງເອເຟໂຊ ບ່ອນທີ່ຕີໂມທຽວໜຸ່ມໄດ້ເປັນອາຈານຢູ່ທີ່ນັ້ນ. ນັກວິຊາການໂຕ້ວາທີກ່ຽວກັບເນື້ອໃນໃຈຄວາມສະເພາະຂອງຄຳສອນທີ່ບໍ່ຖືກຕ້ອງເຫຼົ່ານີ້, ແຕ່ພວກເຂົາເຈົ້າຕົກລົງເຫັນດີວ່າສິ່ງທີ່ຄູສອນປອມເຫຼົ່ານີ້ໄດ້ພະຍາຍາມສອນແມ່ນກົງກັນຂ້າມກັບພຣະກິດຕິຄຸນ(ຂ່າວປະເສີດ)ຂອງພຣະເຢຊູ. ໂປໂລໄດ້ເຕືອນຕີໂມທຽວວ່າ, ບໍ່ເໝືອນກັບຂ່າວປະເສີດປອມທີ່ລາວເຄີຍໄດ້ຍິນ, "*...ພຣະທັມຄັມພີອັນສັກສິດ ຊຶ່ງສາມາດໃຫ້ເຈົ້າມີປັນຍານຳເຈົ້າໄປເຖິງຄວາມພົ້ນໄດ້ດ້ວຍທາງຄວາມເຊື່ອໃນພຣະຄຣິດຄືພຣະເຢຊູ.*"(ຂໍ້ 15). ພຣະຄັມພີດຽວກັນນີ້ ເຮັດໃຫ້ພວກເຮົາສລາດໃນເລື່ອງຄວາມລອດພົ້ນໃນປະຈຸບັນນີ້.
2. **ພຣະຄຳຂອງພຣະເຈົ້າສະແດງໃຫ້ພວກເຮົາເຫັນວິທີການຊຳຣະໃຫ້ບໍຣິສຸດ.** *ປົກກະຕິແລ້ວພວກເຮົາໃຊ້ຄຳວ່າ* *ລອດພົ້ນແລ້ວ* ເພື່ອບັນລະຍາຍເຖິງສິ່ງທີ່ເກີດຂຶ້ນເມື່ອພວກເຮົາໄວ້ວາງໃຈໃນພຣະຄຣິດເປັນຄັ້ງແລກແລະກາຍເປັນຊາວຄຣິສະຕຽນ. ພວກເຮົາໄດ້ຮັບຄວາມລອດຈາກບາບຂອງພວກເຮົາໃນເວລານັ້ນ. ຄຳວ່າ *ຊຳຣະໃຫ້ບໍຣິສຸດ (sanctified)* ບອກພວກເຮົາເຖິງສິ່ງທີ່ພຣະເຈົ້າຊົງເຮັດເພື່ອພວກເຮົາຫລັງຈາກພວກເຮົາໄດ້ກາຍເປັນຄຣິສະຕຽນແລ້ວ. ພຣະເຈົ້າຊົງເຮັດໃຫ້ພວກເຮົາຄ້າຍຄືກັບພຣະເຢຊູຫຼາຍຂຶ້ນເລື້ອຍໆ. ເຊັ່ນດຽວກັນກັບທີ່ພວກເຮົາຕ້ອງການພຣະຄຳຂອງພຣະເຈົ້າສຳລັບຄວາມລອດ, ພວກເຮົາຕ້ອງການພຣະຄຳຂອງພຣະເຈົ້າເພື່ອການຊຳຣະໃຫ້ບໍຣິສຸດ, ເພື່ອເຕີບໂຕຂຶ້ນໃນຄວາມລອດນັ້ນ.

*ໃຜໄດ້ຝຶກຝົນຫຼືເອົາແບບຢ່າງໃຫ້ທ່ານວ່າການດຳເນີນຊີວິດຕາມພຣະຄຳຂອງພຣະເຈົ້ານັ້ນໝາຍຄວາມວ່າແນວໃດ?*

## 3. 2 ຕີໂມທຽວ 3:16-17

*[16]ພຣະທັມຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ. [17]ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເລັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ.*

ພຣະຄຳຂອງພຣະເຈົ້າເຮັດໃຫ້ພວກເຮົາສລາດໃນສັບພະສິ່ງທີ່ພວກເຮົາຕ້ອງການເພື່ອຄວາມລອດພົ້ນ ແລະດຳເນີນຊີວິດຕາມທີ່ພຣະເຈົ້າໄດ້ຊົງຕັ້ງພຣະທັຍໄວ້. ໂປໂລໄດ້ຂຽນໄວ້ວ່າ: "*ພຣະທັມຄັມພີທຸກຕອນໄດ້ຮັບການຊົງບັນດານໃຈຈາກພຣະເຈົ້າ.*" ໃນພາສາ ກຣີກ, ນັ້ນໝາຍຄວາມຕາມຕົວອັກສອນວ່າ "**ລົມຫາຍໃຈຂອງພຣະເຈົ້າ**." ນີ້ແມ່ນສິ່ງທີ່ພາໃຫ້ພຣະຄັມພີມີຣິດອຳນາດເໜືອຊີວິດຂອງພວກເຮົາ-ພຣະຄັມພີມາຈາກພຣະເຈົ້າເອງ. ເຖິງແມ່ນວ່າພຣະອົງໄດ້ຊົງໃຊ້ຜູ້ຊາຍທີ່ແທ້ຈິງໃນເວລາທີ່ແທ້ຈິງເພື່ອຂຽນພຣະຄຳນັ້ນ, ພຣະເຈົ້າເປັນຜູ້ທີ່ຊົງເຮັດໃຫ້ພຣະຄັມພີມີອຳນາດ. ໂດຍໃຊ້ສະຕິປັນຍາແລະຮູບແບບວັນນະຄະດີຂອງນັກຂຽນພຣະຄັມພີແຕ່ລະຄົນ, ພຣະເຈົ້າໄດ້ຊົງຊີ້ນຳວິທີການເພື່ອໃຫ້ແນ່ໃຈວ່າຄວາມຕັ້ງໃຈຂອງພຣະອົງເປັນຜລິດຜົນສຸດທ້າຍ. ດັ່ງນັ້ນ, ຖ້າພຣະເຈົ້າເປັນສາສດາຈານສູງສຸດ (ດ້ານດົນຕຣີ) ທີ່ຊົງສັ່ງແລະຊົງດຳເນີນການຈັກກະວານ, ຈາກນັ້ນ**ພຣະຄັມພີກໍແມ່ນເພງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ແລະດຳເນີນຊີວິດຕາມ.**

*ຂໍ້ຄວາມນີ້ສົ່ງຜົນສະທ້ອນຕໍ່ທັສນະຂອງທ່ານກ່ຽວກັບອຳນາດແລະຄວາມໜ້າເຊື່ອຖືຂອງພຣະຄຳຂອງພຣະເຈົ້າແນວໃດ?*

ຈົ່ງພິຈາຣະນາປະສິດທິພາບຂອງພຣະຄຳຂອງພຣະເຈົ້າດັ່ງຕໍ່ລົງໄປນີ້:

- ພຣະຄຳຂອງພຣະເຈົ້າ ເປັນປໂຍດສຳລັບການສອນ.
- ພຣະຄຳຂອງພຣະເຈົ້າ ເປັນປໂຍດສຳລັບການຕັກເຕືອນວ່າກ່າວ.
- ພຣະຄຳຂອງພຣະເຈົ້າ ເປັນປໂຍດສຳລັບການປັບປຸງແກ້ໄຂໃຫ້ຖືກຕ້ອງ.
- ພຣະຄຳຂອງພຣະເຈົ້າ ເປັນປໂຍດສຳລັບການອົບຮົມໃນທາງຊອບທັມ.

**ໃນຊົນໂພນີແຫ່ງຊີວິດ, ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາຮູ້ ແລະດຳເນີນຊີວິດຕາມພຣະຄຳຂອງພຣະອົງ-ເພື່ອປະຕິບັດຕາມການຊົງນຳພາຂອງພຣະອົງ ໃນຂະນະທີ່ຊາວໂລກເດີນໄປຕາມຈັງຫວະຂອງມືກອງຄົນອື່ນ.**

*ກຸ່ມຂອງພວກເຮົາໄດ້ມີບົດບາດອັນໃດແດ່ໃນການເຕີບໃຫຍ່ແລະຈັດຕຽມພຣະຄຳຂອງພຣະເຈົ້າໃຫ້ກັນແລະກັນ?*

## ນຳໃຊ້ໃນຊີວິດ

ທ່ານຈະດຳເນີນຊີວິດຕາມຄວາມເຊື່ອຂອງທ່ານໃນພຣະຄຳຂອງພຣະເຈົ້າແນວໃດ? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງເຂົ້າຮ່ວມວົງ(ທີມ).** ບາງທີທ່ານຮູ້ສຶກວ່າທ່ານບໍ່ເຄີຍປັບຊີວິດຂອງທ່ານໃສ່ກັບເພງຂອງພຣະເຢຊູ. ຖ້າຫາກວ່າທ່ານບໍ່ເຄີຍໄວ້ວາງໃຈພຣະຄຣິດສຳລັບການໃຫ້ອະພັຍແລະຄວາມລອດພົ້ນ, ຈົ່ງເຮັດດຽວນີ້. ຈົ່ງສົນທະນາກັບຜູ້ນຳທີ່ເຊື່ອຖືໄວ້ໃຈໄດ້ ຫຼື ສິດຍາພິບານ ເພື່ອຊ່ວຍທ່ານດຳເນີນການໃນຂັ້ນຕອນຕໍ່ໄປ.
- **ຈົ່ງຫລິ້ນເພງດຽວກັນ.** ບາງທີທ່ານກຳລັງພະຍາຍາມຍ່າງຕາມຈັງຫວະຂອງມືກອງສອງຄົນທີ່ແຕກຕ່າງກັນ. ຖ້າທ່ານໄດ້ເດີນໄປໃນທາງບາບທີ່ບໍ່ກັບໃຈ, ຈົ່ງສາຣະພາບບາບຂອງທ່ານຕໍ່ພຣະເຈົ້າ. ຈົ່ງວາງແຜນທີ່ຈະອ່ານພຣະຄຳຂອງພຣະເຈົ້າເປັນປະຈຳ ເພື່ອວ່າທ່ານຈະໄດ້ຍິນພຣະອົງຢ່າງສມ່ຳສເມີແລະປະຕິບັດຕາມການຊົງຮຽກເອີ້ນຂອງພຣະອົງໃນຊີວິດຂອງທ່ານ.
- **ຈົ່ງນຳພາການຊ້ອມ.** ທ່ານຮັບເອົາພຣະຄຳຂອງພຣະເຈົ້າເປັນປະຈຳ ແລະຮູ້ຈັກຄວາມຈຳເປັນຂອງທ່ານສຳລັບພຣະຄຳນັ້ນ. ຈົ່ງແບ່ງປັນສິ່ງທີ່ທ່ານໄດ້ຮຽນຮູ້ໃນອາທິດນີ້ກັບຄົນອື່ນ. ບາງທີມັນອາດຈະເປັນການຊວນຫມູ່ກິນກາເຟ ຫຼື ບາງທີມັນອາດຈະເປັນການນຳພາການສຶກສາພຣະຄັມພີກຸ່ມຂະຫນາດນ້ອຍ. ຈົ່ງສົ່ງຕໍ່ພຣະຄຳຂອງພຣະເຈົ້າໃຫ້ກັບຄົນອື່ນໆ.

ໂລກອາດຈະສົ່ງສຽງໂດ່ງດັງແຕ່ມັນບໍ່ຖືກຕ້ອງ. ພວກເຮົາມີຄູ່ມືທີ່ດີກວ່າ. <u>ເມື່ອພວກເຮົາວາງຊີວິດຂອງພວກເຮົາໃສ່ກັບພຣະຄັມພີ, ພວກເຮົາຕິດຕາມພຣະອົງຜູ້ນຳຂອງຈັກກະວານ ທີ່ຊົງນຳພາພວກເຮົາໃນບົດເພງທີ່ມ່ວນຊື່ນຂອງພຣະອົງສຳລັບຊີວິດຂອງພວກເຮົາ</u>.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**